ສະບັບທີ 107 ເມສາ 2010

ອພ 128 / ພຈ 050510 ຈພ 1,000

# ຈົດໝາຍຂ່າວ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

ຊົມເຊີຍ ວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ ຄົບຮອບ 55 ປີ ຢ່າງສຸດໃຈ

## ສາລະບານ

ກອງປະຊຸມ
ໜ້າ 1 - 3

ການເຄື່ອນໄຫວ
ໜ້າ 3 - 5

ສິ່ງຄວນຮູ້ຕ່າງໆ
ໜ້າ 5 - 9

ຂະບວນການ
ໜ້າ 9 - 12

**ຄະນະຮັບຜິດຊອບ**

ດຣ. ບຸນຖອງ ບົວຫອມ

ໄວຍະພັດ ທັດຕະມະນີວົງ

**ບັນນາທິການ**

ບັນດິດ ຣາມາງກູນ

ອະໂນລາດ ຈັນທະວົງສາ

ດຣ. ລິນຄຳ ດວງສະຫວັນ

ພູມີ ອິນທະປັນຍາ

ສົມພະຈັນ ວົງພະສຸວັນ

**ອອກແບບ**

ຂັນຄຳ ອ້ວນອຸດົມ

ໄກສອນ ສີຫາຈັກ

ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ,

ຕູ້ ປ. ນ. 7170 ວຽງຈັນ

ໂທ: (856 21) 770892

(856 21) 770089

ແຟກ: (856 21) 770892

Email: khanhkham@nafri.org.la

020 5426630

www.nafri.org.la

## ກອງປະຊຸມວາງແຜນ ໂຄງການຄົ້ນຄວ້າ ຍົກຜະລິດຕະພາບ ການຜະລິດ ແລະ ການຕະຫຼາດ



*ໂດຍ:ຄຳພູ ຜຸຍຍະວົງ, ສູນຄົ້ນຄວ້ານະໂຍບາຍ ກະສິກຳ ແລະ ປ່າໄມ້*

ເພື່ອເປັນການວາງແຜນ ຈັດຕັ້ງປະຕິບັດ ໂຄງການຄົ້ນຄວ້າຍົກສະມັດຕະພາບການຜະລິດ ແລະ ການຕະຫຼາດ ເຂດທົ່ງພຽງ ແລະ ເຂດພູດອຍ, ໃນວັນ ທີ 17 ຫາ 19 ມີນາ 2010 ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ໂຄງການ ACIAR., ຈຶ່ງໄດ້ຈັດກອງປະຊຸມ ປຶກສາຫາລືກ່ຽວກັບການວາງແຜນເບື້ອງຕົ້ນຂຶ້ນ ທີ່ສູນຜະລິດເມັດພັນເຂົ້າ ທ່າສະໂນ ແຂວງສະຫວັນນະເຂດ, ໂດຍການເປັນປະທານຮ່ວມ ຂອງ ທ່ານ ດຣ. ບຸນຖອງ ບົວຫອມ, ຫົວໜ້າຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ທ່ານ ສຸລິໂຍ ແກ້ວຜາລີວັນ, ຮອງຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ. ມີແຂກເຂົ້າຮ່ວມ ທັງໝົດ 29 ຄົນ ຍິງ 5 ຄົນ ທີ່ມາຈາກ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ຈາກບັນດາ ສະຖາບັນ ຄົ້ນຄວ້າສາກົນ ພ້ອມດ້ວຍພະແນກ ແລະ ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ ຈາກ ແຂວງສະຫວັນນະເຂດ ຄື:ເມືອງນອງ, ເມືອງ ເຊໂປນ, ເມືອງພິນ, ເມືອງພະລານໄຊ ແລະ ເມືອງອຸທຸມພອນ ແລະ ແຂວງຈຳປາສັກ ຄື: ເມືອງສຸຂຸມາ ແລະ ເມືອງມູນລະປະໂມກ ເຂົ້າຮ່ວມ.

ສະໜັບສະໜູນ ໂດຍ: ໂຄງການ ຄົ້ນຄວ້າ ເຂດພູດອຍ ແລະ ພັດທະນາຄວາມສາມາດ

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອສະເໜີແນວຄວາມຄິດ ແລະ ແນະນຳໂຄງການຕໍ່ການນຳ ແຂວງ ແລະ ພະນັກງານທ້ອງຖິ່ນ, ຄົ້ນຄວ້າ ວິທີການ ແລະ ຫົວຂໍ້ການຄົ້ນຄວ້າ, ຂໍທິດຊີ້ນຳ ຈາກ ການນຳພະແນກ ຂອງ ແຂວງ ແລະ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ.

ຜ່ານການດຳເນີນກອງປະຊຸມ ເປັນເວລາ 3 ວັນ ສາມາດຄັດເລືອກໄດ້ ເມືອງທີ່ເປັນເປົ້າໝາຍ ແລະ ກິດຈະກຳການຄົ້ນຄວ້າ ອັນຮີບດ່ວນ ເພື່ອຈັດຕັ້ງປະຕິບັດ ໃນປີ 2010 ພາຍຫຼັງທີ່ໂຄງການໄດ້ຮັບອຸມັດຢ່າງເປັນທາງການ. ກອງປະຊຸມໄດ້ປິດລົງດ້ວຍໝາກຜົນສຳເລັດອັນຈົບງາມ.

# ກອງປະຊຸມ ປຶກສາຫາລື ແລະ ແລກປ່ຽນຂໍ້ມູນຂ່າວສານ



*ໂດຍ: ພູທອນ ສິມມະວັນ, ສູນຂໍ້ມູນຂ່າວສານ*

ໃນຕອນເຊົ້າ ຂອງວັນທີ 25 ມີນາ 2010 ຢູ່ທີ່ຫ້ອງປະຊຸມສູນ ຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້, ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໄດ້ເປີດກອງປະຊຸມປຶກສາຫາລື ແລະ ແລກປ່ຽນຂໍ້ມູນຂ່າວສານ ແລະ ການມີສ່ວນຮ່ວມ ໃນການປັບປຸງເອກະສານໂຄງການ (NAPA follow up UNDP) ໂດຍແມ່ນ ທ່ານ ສຸລິວັນທອງ ກິ່ງແກ້ວ ຮອງຫົວໜ້າ ສະຖາບັນ ໃຫ້ກຽດເປັນປະທານ ກ່າວເປີດກອງປະຊຸມ, ມີຜູ້ເຂົ້າຮ່ວມ ຈາກອົງການຕ່າງໆ ທັງໝົດ 32 ທ່ານ.

ຈຸດປະສົງ ຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອປັບປຸງຄວາມອາດສາມາດ ໃນການປັບຕົວເຂົ້າສູ່ສະພາບເດີມດ້ານກະສິກຳ ຈາກຜົນກະທົບ ຂອງການປ່ຽນແປງ ສະພາບດິນຟ້າອາກາດ ຢູ່ ສປປ ລາວ (NAPA followup project) ແມ່ນບາດກ້າວເລີ່ມຕົ້ນ ຂອງໂຄງການ. ກອງປະຊຸມແມ່ນຈະໄດ້ນຳເອົາພາກສ່ວນທີ່ກ່ຽວຂ້ອງ ຈາກພາກລັດ, ອົງການສະຫະປະຊາຊາດ, ອົງກອນທີ່ບໍ່ຂື້ນກັບລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ທີ່ພົວພັນກັບປັດໃຈປ່ຽນແປງ ຂອງດິນຟ້າອາກາດໃນປະຈຸບັນ ແລະ ໃນອະນາຄົດຂ້າງໜ້າເຂົ້າມາມີສ່ວນຮ່ວມ.

**ເນື້ອໃນກອງປະຊຸມ ຍັງຄາດຫວັງໝາກຜົນໄວ້ 6 ຢ່າງ ຄື:**

1) ແຜນງານການຈັດຕັ້ງປະຕິບັດ ການປັບຕົວແຫ່ງຊາດ (NAPA), 2) ຍຸດທະສາດໃໝ່ ຂອງ ສ ປ ປ ລາວ (ມີນາ 2010), 3) 7 ທາງເລືອກໃນການປັບຕົວ ຢູ່ໃນຍຸດທະສາດສຳລັບປ່ຽນແປງອາກາດທີ່ກ່ຽວກັບກະສິກຳ ແລະ ກາຄຳ້ປະກັນດ້ານສະບຽງອາຫານ, 4) ບົດບາດຂອງ ສຄກປ ໃນການຄິດຄົ້ນນະວັດຕະກຳ ແລະ ການຄົ້ນຄວ້າແບບປະຍຸກ ສຳລັບກະສິກຳ, 5) ຄວາມສຳຄັນຂອງໂຄງການ ຂອງແຜນງານການ ຈັດຕັ້ງປະຕິບັດການປັບຕົວແຫ່ງຊາດ ເພື່ອຊ່ວຍເຮັດໃຫ້ຍຸດທະສາດໃໝ່ນີ້ ປະກົດຜົນເປັນຈິງ, 6) ໝາກຜົນຄາດຫວັງໄລຍະຍາວ: ຄວາມສຳຄັນຂອງການສະໜັບສະໜູນພາກສ່ວນທີ່ມີຄວາມສົນໃຈ ແລະ ຄວາມຕ້ອງການຮ່ວມມືທາງດ້ານການເງິນ. ໃນໝາກຜົນທີ່ຄາດຫວັງນັ້ນຍັງມີຫົວຂໍ້ທີ່ສຳຄັນ ຄື:

- ດ້ານການຜັນຂະຫຍາຍກະສິກຳ,
- ເພີ້ມສະມັດຕະພາບການຜະລິດ ດ້ວຍການຜະລິດກະສິກຳແບບອະນຸລັກ,
- ປັບປຸງ ແລະ ກວດກາ ການຄຸ້ມຄອງຊັບພະຍາກອນນຳ້,
- ສົ່ງເສີມການຜະລິດຂະໜາດນ້ອຍ, ກາງ ແລະ ສະໜັບສະໜູນການປັບຕົວທີ່ຕິດແທດກັບຊຸມຊົນ,
- ດຳເນີນການ ຄົ້ນຄວ້າ ສະເພາະໃນລະດັບມະຫາພາກ ແລະ ລະດັບບ້ານ,
- ຊຸກຍູ້ການແຈກຢາຍເອກະສານ ແລະ ການສົ່ງເສີມ ແລະ
- ປັບປຸງການຮ່ວມມື.

ໃນການດຳເນີນກອງປະຊຸມຄັ້ງນີ້ ຜູ້ເຂົ້າຮ່ວມຍັງໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດການລິເລີ່ມແຜນການປະຕິບັດ ຂອງໂຄງການ, ປະກອບຄຳຄິດຄຳເຫັນ ແລະ ພ້ອມກັນປຶກສາຫາລືກ່ຽວກັບບັນຫາຕ່າງໆ ຂອງສະພາບການຫຼຸດຜ່ອນຄວາມສ່ຽງໄພຕ່າງໆ ທາງດ້ານສິ່ງແວດລ້ອມ ແລະ ດ້ານກະສິກຳ ໃນລະດັບພາກພື້ນ.

# ໜ່ວຍພັກ ສູນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ ໄດ້ຮັບນາມມະຍົດ ເປັນໜ່ວຍພັກແຂງ - ຮູ້ນຳພາຮອບດ້ານ 4 ປີຊ້ອນ



*ໂດຍ: ສີຈັນ ຈັນດີພິດ, ສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້ພາກເໜືອ*

ໃນຕອນເຊົ້າ ຂອງວັນທີ 14 ມີນາ 2010 ຢູ່ທີ່ຫ້ອງປະຊຸມ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ ໄດ້ຈັດໃຫ້ມີພິທີມອບຮັບ ໃບຍັ້ງຢືນໜ່ວຍພັກແຂງ ຮູ້ນຳພາຮອບດ້ານ ໃຫ້ແກ່ 4 ໜ່ວຍພັກ ອ້ອມຂ້າງພະແນກ ກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ.

ໃນນີ້ ໜ່ວຍພັກສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ ກໍ່ໄດ້ຮັບໃບຍັ້ງຢືນໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2009. ໃຫ້ກຽດມອບໃບຍັ້ງຢືນຄັ້ງນີ້ ໂດຍທ່ານ ດຣ. ຄຳແພງ ໄຊສົມແພງ ຮອງເລຂາພັກແຂວງ ຮອງເຈົ້າແຂວງ ແຂວງຫຼວງພະບາງ ຂຶ້ນຮັບເອົາ ໂດຍທ່ານ ທຸມຈິດສະຫວາດ ໂສດາຣັກ ຮອງເລຂາຄະນະພັກຮາກຖານ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ເລຂາໜ່ວຍພັກ ສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ, ຫົວໜ້າສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ. ກ່ອນໜ້ານີ້ ໜ່ວຍພັກ ສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ ກໍ່ໄດ້ຮັບໃບຍັ້ງຢືນໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ມາແລ້ວ 3 ປີ ຕິດຕໍ່ກັນ ຄື: ປີ 2006, 2007 ແລະ 2008.

ຜົນງານດັ່ງກ່າວນີ້ ແມ່ນຍ້ອນຄະນະໜ່ວພັກ ໄດ້ຕັ້ງໜ້າສຶກສາອົບຮົມທາງດ້ານແນວຄິດການເມືອງ ແລະ ມີການເຜີຍແຜ່ແນວທາງນະໂຍບາຍ ຂອງ ພັກ-ລັດ ເປັນຕົ້ນແມ່ນມະຕິກອງປະຊຸມໃຫຍ່ສະໄໝຕ່າງໆ, ແຜນພັດທະນາເສດຖະກິດສັງຄົມແຫ່ງລັດ, ແຜນພັດທະນາກະສິກຳ ແລະ ປ່າໄມ້. ອັນໄດ້ເຮັດໃຫ້ບັນດາສະຫາຍສະມາຊິກພັກ ແຕ່ລະສະຫາຍ ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີການຈຳແນກມິດ ແລະ ສັດຕູຢ່າງຈະແຈ້ງ ແລະ ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໄດ້ດີຕະຫຼອດມາ. ສ່ວນວຽກງານ ດ້ານວິຊາສະເພາະແມ່ນ ໄດ້ຜັນຂະຫຍາຍຍຸດທະສາດການຄົ້ນຄວ້າ ຂອງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ແຜນຍຸດທະສາດວຽກງານການຄົ້ນຄວ້າ ຂອງສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ພາກເໜືອ ເຂົ້າສູ່ການຈັດຕັ້ງປະຕິບັດວຽກງານຕົວຈິງຂອງແຕ່ລະສະຫາຍສະມາຊິກພັກ ເພື່ອຮັບປະກັນ ໃຫ້ແກ່ການນຳໃຊ້ ຊັບພະຍາກອນດ້ານກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມຍືນຍົງຕະຫຼອດໄປ.

# ການເຄື່ອນໄຫວວຽກງານ ດ້ານວິຊາສະເພາະ ຂອງ ໜ່ວຍຮາກຖານ ກຳມະບານ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້ (ສຄດ)

*ໂດຍ: ສົມພານ ອຸ່ນປະເສີດ,*
*ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້*

ເພື່ອເປັນການສ້າງຂະບວນການ ຄຳນັບຮັບຕ້ອນກອງປະຊຸມໃຫຍ່ ຂອງໜ່ວຍພັກ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ແລະ ສູນນິເວດ ກະສິກຳ, ທີ່ຈະໄຂຂຶ້ນໃນເດືອນ ເມສາ/2010, ດັ່ງນັ້ນ ສະມາຊິກກຳມະບານ ຂອງສູນຈຶ່ງໄດ້ລົງສຳຫຼວດ ກຳນົດເຂດຜະລິດ ກະສິກຳ ແລະ ປ່າໄມ້ ໃນ 4 ເມືອງ ຄື: ເມືອງຜົ້ງສາລີ, ເມືອງຂວາ, ເມືອງບຸນໃຕ້ ແລະ ເມືອງບຸນເໜືອ ແຂວງຜົ້ງສາລີ.

ຈຸດປະສົງ ຂອງການລົງສຳຫຼວດໃນຄັ້ງນີ້: 1) ລົງເກັບກຳຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ນຳຂະແໜງການທີ່ກ່ຽວຂ້ອງ; 2) ລົງເກັບກຳຂໍ້ມູນ ທາງດ້ານກາຍະພາບ ພາກສະໜາມ, ກຳນົດເຂດການຜະລິດກະສິກຳ ແລະ ປ່າໄມ້ ແລະ ວາງແຜນພັດທະນາ ກະສິກຳ ແລະ ປ່າໄມ້ ໃນຕໍ່ໜ້າ.

ການຈັດຕັ້ງປະຕິບັດ ເລີ້ມແຕ່ເດືອນ 02/2010 ຫາທ້າຍເດືອນ 3/2010, ປະກອບມີພະນັກງານວິຊາການ ທັງໝົດ 14 ຄົນ, ພະນັກງານ ວິຊາການ ຂອງສູນມີ 4 ຄົນ, ພະນັກງານວິຊາການ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ 1 ຄົນ ແລະ



ແຕ່ລະເມືອງ ໄດ້ມີການແຕ່ງຕັ້ງ ຄະນະຊີ້ນຳ 4 ຄົນ ແລະ ແຕ່ງຕັ້ງວິຊາການເມືອງ 5 ຄົນ ເພື່ອເຮັດວຽກຮ່ວມກັນ.

ໃນການລົງສຳຫຼວດ ກຳນົດເຂດການຜະລິດກະສິກຳ ແລະ ປ່າໄມ້ ໃນລະດັບຂັ້ນເມືອງຄັ້ງນີ້ ແມ່ນໄດ້ສຳເລັດ ໃນຂັ້ນພື້ນຖານ ແລະ ຈະຕ້ອງໄດ້ດັດແກ້ ແລະ ປັບປຸງບາງຈຸດໃຫ້ມີຄວາມຊັດເຈນ ແລະ ສົມບູນ ແລ້ວຈຶ່ງຈັດພິມມອບສົ່ງໃຫ້ແຂວງຜົ້ງສາລີ ໃນທ້າຍເດືອນ 4/2010, ລວມມີຂໍ້ມູນຕ່າງໆ ເຊັ່ນ: ແຜນທີ່ມາດຕາສ່ວນ 1/50,000 ແລະ ບົດລາຍງານຄົບຊຸດ, ຊຶ່ງແຕ່ລະເມືອງ ຈະມີຂໍ້ມູນເປັນຂອງຕົນເອງ ແລະ ຂໍ້ມູນດັ່ງກ່າວ ຈະຊ່ວຍໃຫ້ແຕ່ລະເມືອງ ເປັນບ່ອນອີງເຂົ້າໃນການກຳນົດເຂດການຜະລິດກະສິກຳ ແລະ ປ່າໄມ້ ແລະ ຍັງ ເປັນການຊ່ວຍເຂົ້າໃນການວາງແຜນພັດທະນາ ທາງດ້ານກະສິກຳ ແລະ ປ່າໄມ້ ໃນຕໍ່ໜ້າ, ຮູ້ຈັກນຳໃຊ້ຊັບພະຍາກອນທີ່ດິນດັ່ງກ່າວ ຢ່າງຍືນນານ ແລະ ມີປະສິດທິຜົນສູງ.

## ການເຄື່ອນໄຫວວຽກງານ ວິຊາສະເພາະ ຂອງໜ່ວຍຮາກຖານ ຊາວໜຸ່ມ ປ ປ ລາວ ຂອງ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້

*ໂດຍ: ສົມພານ ອຸ່ນປະເສີດ,*
*ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້*

ເພື່ອເປັນການຄຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຂອງໜ່ວຍພັກ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້ ແລະ ສູນນິເວດກະສິກຳ, ທີ່ເປີດຂຶ້ນໃນຕົ້ນເດືອນ 4/2010, ດັ່ງນັ້ນ ຊາວໜຸ່ມຂອງສູນ ຈຶ່ງໄດ້ລົງສຳຫຼວດ ການກຳນົດເຂດຜະລິດ ກະສິກຳ ແລະ ປ່າໄມ້ ໃນ 3 ເມືອງ ຄື: ເມືອງທ່າປາງທອງ, ເມືອງສອງຄອນ ແລະ ເມືອງໄຊພູທອງ ແຂວງສະຫວັນນະເຂດ.

ຈຸດປະສົງ ຂອງການລົງສຳຫຼວດ ໃນຄັ້ງນີ້ ແມ່ນເພື່ອ: 1) ລົງເກັບກຳຂໍ້ມູນ ທາງດ້ານເສດຖະກິດ-ສັງຄົມນຳຂະແໜງການທີ່ກ່ຽວຂ້ອງ, 2) ລົງເກັບກຳຂໍ້ມູນທາງດ້ານກາຍະພາບພາກສະໜາມ ເພື່ອຊ່ວຍເຂົ້າໃນການກຳນົດເຂດການຜະລິດກະສິກຳ ແລະ ປ່າໄມ້ ແລະ ຊ່ວຍເຂົ້າໃນການວາງແຜນພັດທະນາ ກະສິກຳ ແລະ ປ່າໄມ້ ໃນຕໍ່ໜ້າ.

ການຈັດຕັ້ງປະຕິບັດ ໄດ້ເລີ່ມແຕ່ຕົ້ນ ເດືອນ 3/2010 ຫາ ກາງເດືອນ 4/2010, ຊຶ່ງປະກອບມີ ພະນັກງານວິຊາການທັງໝົດ 13 ຄົນ, ພະນັກງານວິຊາການສູນ 4 ຄົນ, ພະນັກງານວິຊາການ ພະແນກກະສິກຳ ແລະ ປ່າໄມ້ແຂວງ 1 ຄົນ ແລະ ແຕ່ລະເມືອງ ໄດ້ມີການແຕ່ງຕັ້ງຄະນະຊີ້ນຳ 3 ຄົນ ແລະ ແຕ່ງຕັ້ງວິຊາການເມືອງ 5 ຄົນ ເພື່ອເຮັດວຽກຮ່ວມກັນ.

ຜົນໄດ້ຮັບຈາກການລົງສຳຫຼວດ ການກຳນົດເຂດການຜະລິດກະສິກຳ ແລະ ປ່າໄມ້ ໃນລະດັບເມືອງ ໃນເທື່ອນີ້ ແມ່ນສຳເລັດຂັ້ນເບື້ອງຕົ້ນ ແລະ ໄດ້ລາຍງານໃຫ້ທາງທ້ອງຖິ່ນຮັບຮູ້ກ່ຽວກັບຕົວເລກໃນດ້ານຕ່າງໆ ແລະ ຍັງຈະໄດ້ສືບຕໍ່ປັບປຸງບາງຈຸດໃຫ້ມີຄວາມຊັດເຈນ ແລະ ສົມບູນ, ແລ້ວຈຶ່ງຈັດພິມມອບສົ່ງໃຫ້ທາງເມືອງທີ່ກ່ຽວຂ້ອງ, ຊຶ່ງມີຂໍ້ມູນຕ່າງໆ ເຊັ່ນ: ແຜນທີ່ມາດຕາສ່ວນ 1/50,000 ແລະ ບົດລາຍງານຄົບຊຸດ, ຊຶ່ງແຕ່ລະເມືອງ ຈະມີຂໍ້ມູນເປັນຂອງຕົນເອງ ແລະ ຂໍ້ມູນດັ່ງກ່າວ ຈະຊ່ວຍໃຫ້ແຕ່ລະເມືອງ ເປັນບ່ອນອີງເຂົ້າໃນການກຳນົດເຂດການຜະລິດ ກະສິກຳ ແລະ ປ່າໄມ້ ແລະ ຍັງເປັນການຊ່ວຍເຂົ້າໃນການວາງແຜນພັດທະນາທາງດ້ານກະສິກຳ ແລະ ປ່າໄມ້ ໃນຕໍ່ໜ້າ, ຮູ້ຈັກນຳໃຊ້ຊັບພະຍາກອນທີ່ດິນດັ່ງກ່າວ ຢ່າງຍືນນານ ແລະ ມີປະສິດຕິຜົນ.



## ຊປປ ລາວ ສ້າງຂະບວນການ ດ້ານວິຊາການ ເພື່ອຕ້ອນຮັບ



*ໂດຍ: ອາລຸນເງິນ ສິນທະນູ, ສູນຂໍ້ມູນຂ່າວສານ*

ເພື່ອເຮັດໃຫ້ບັນຍາກາດໃນການສ້າງຂະບວນການຕ້ອນຮັບວັນສຳຄັນຕ່າງໆ ຂອງ ຊປປ ລາວ ກໍ່ຄືວັນຄົບຮອບການສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ ແລະ ຊປປ ລາວຄົບຮອບ 55 ປີ ແລະ ພ້ອມກັນນີ້ ກໍ່ເປັນການຕ້ອນຮັບກອງປະຊຸມໃຫຍ່ ຄັ້ງທີ I ຂອງຄະນະພັກຮາກຖານ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ ທີ່ຈະມີຂຶ້ນໃນມໍ່ໆນີ້.

ໃນວັນທີ 29 ມີນາ 2010 ຕາມແຜນການໃນການເຄື່ອນໄຫວດ້ານວິຊາການ ຂອງ ຊປປ ລາວ ໜ່ວຍຮາກຖານສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ແຫ່ງຊາດ ຈຶ່ງໄດ້ຈັດໃຫ້ມີການຝຶກອົບຮົມ ການນຳໃຊ້ຂໍ້ມູນຂ່າວສານເທັກໂນໂລຢີຂຶ້ນ ໂດຍແມ່ນສະມາຊິກ ຊປປ ລາວ ສູນຂໍ້ມູນຂ່າວສານ ທີ່ຂຶ້ນກັບ ສະຖາບັນ ເປັນຜູ້ຈັດຕັ້ງປະຕິບັດ. ໃນນີ້ ກໍ່ເພື່ອເປັນການສົ່ງເສີມໃຫ້ສະມາຊິກ ຊປປ ລາວ ຮູ້ຈັກ ແລະເຂົ້າໃຈເພີ່ມເຕີມ ໃນການນຳໃຊ້ ຂໍ້ມູນຂ່າວສານເທັກໂນໂລຢີໃນຍຸກປະຈຸບັນໃຫ້ເກີດປະໂຫຍດ ແລະ ມີປະສິດທິຜົນຕໍ່ກັບວຽກງານການຄົ້ນຄວ້າ.

ການຝຶກອົບຮົມໃນຄັ້ງນີ້ ມີສະມາຊິກ ຊປປ ລາວ ໃນແຕ່ລະໜ່ວຍຮາກຖານ ອ້ອມຂ້າງສະຖາບັນ ເຂົ້າຮ່ວມທັງໝົດ 27 ສະຫາຍ ແລະ ໃຊ້ເວລາ ຢູ່ 3 ວັນ, ໃນຫົວຂໍ້: ໄພອັນຕະລາຍ ແລະ ການປ້ອງກັນ ຈາກການນຳໃຊ້ອິນເຕີເນັດ ແລະ ການສືບຄົ້ນຂໍ້ມູນການຄົ້ນຄວ້າຜ່ານທາງລະບົບຖານຂໍ້ມູນທີ່ມີ ຄື: ລະບົບຖານຂໍ້ມູນກະສິກຳ ແລະ ປ່າໄມ້ລາວ (LAD), ລະບົບຫ້ອງສະໝຸດ (NALIS).

## ການຈັດຕັ້ງຜັນຂະຫຍາຍ 4 ເປົ້າໝາຍ ແລະ 13 ມາດຕາການ

*ໂດຍ: ວຽງສະຫວັນ ອິນທະປັນຍາ, ໜ່ວຍງານຂໍ້ມູນຂ່າວສານ, ສູນຄົ້ນຄວ້າເຂົ້າ ແລະ ພືດເສຖະກິດ*

ຄວາມຄືບໜ້າ ໃນການຈັດຕັ້ງ ຜັນຂະຫຍາຍ 4 ເປົ້າໝາຍ ແລະ 13 ມາດຕາການ ຂອງສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ ມາຮອດປັດຈຸບັນ ການຈັດຕັ້ງປະຕິບັດຄາດໝາຍສູ້ຊົນຍັງເຫຼືອພຽງແຕ່ລະດູດຽວ ຄື ລະດູແລ້ງ 2009/2010. ຜ່ານການຈັດຕັ້ງປະຕິບັດ ໃນຊຸມປີຜ່ານມາ ເຫັນວ່າມີຫຼາຍອັນຕັ້ງໜ້າ ດັ່ງນີ້:

### 1. ວຽກຄົ້ນຄວ້າ ແລະ ຂະຫຍາຍແນວພັນເຂົ້າ

**ການຕີລາຄາ ແລະ ນຳໃຊ້ແນວພັນເຂົ້າພື້ນເມືອງ ລາວທີ່ພວກເຮົາໄດ້ເຕົ້າໂຮມ ແຕ່ປີ 1995-2003.** ຜ່ານຈາກ ການຕີລາຄາ ສາມມາດຄັດໄດ້ 8 ແນວພັນ ຄື: ເຂົ້າໄກ່ນ້ອຍເຫຼືອງ, ຈ້າວແດງ (2 ແນວພັນ), ເຂົ້າກໍ່າໝຽວຫອມ 2 ແນວພັນ, ເຂົ້າກໍ່າຈ້າວຫອມ 2 ແນວພັນ ແລະ ເຂົ້າກໍ່າຈ້າວ 1 ແນວພັນ. ແນວພັນດັ່ງກ່າວ ແມ່ນໄດ້ຂະຫຍາຍເມັດພັນ ແລະກຽມເອົາອອກສູ່ການຜະລິດເປັນສິນຄ້າ ເລີ່ມແຕ່ລະດູຝົນ ປີ 2010 ເປັນຕົ້ນໄປ.

**ການປັບປຸງແນວພັນເຂົ້າ**: ແມ່ນໄດ້ເລີ້ມຈາກການຄັດເລືອກ ສາຍພັນແຍກຕົວ ແລະ ຄົງຕົວ ຈາກ ໄທ-ອີລີ ແລະ ອີລີ ແລະ ປະສົມພັນພາຍໃນສູນ. ຜ່ານຈາກການຈັດຕັ້ງປະຕິບັດ ສາມາດຄັດໄດ້ແນວພັນເຂົ້າໃໝ່ ໃຫ້ຜົນຜະລິດສູງ 5 ແນວພັນ ຄື: ເຂົ້າໜຽວ 3 ແລະ ເຂົ້າຈ້າວ 2 ແນວພັນ. ແນວພັນເຂົ້າໜຽວ ທ່າດອກຄຳ 8 ແລະ 11 ໄດ້ເລີ້ມເອົາອອກສູ່ການຜະລິດ ແຕ່ລະດູນາແຊງ ປີ 2006-2007 ເປັນຕົ້ນມາ ແລະ ໄດ້ກະຈາຍໄປທົ່ວປະເທດ. ທ່າດອກຄຳ 12 ເໝາະສົມສຳລັບເຂດນາໂຄກ ເຂດພາກກາງ ແລະ ໃຕ້ ກໍ່ໄດ້ເລີ້ມເຂົ້າສູ່ການຜະລິດ ແຕ່ລະດູຝົນ 2008 ເປັນຕົ້ນມາ. ສ່ວນແນວພັນເຂົ້າຈ້າວອີກ 2 ແນວພັນ ທີ່ໃຫ້ຜົນຜະລິດສູງ ແລະ ທົນທານຕໍ່ພະຍາດບົ້ງແມງ (TDK 33-9 ແລະ TDK 49-B-6-3-8) ປູກໄດ້ທັງນາປີ ແລະນາແຊງ ຊຶ່ງໄດ້ເລີ້ມເອົາອອກສູ່ການຜະລິດ ພ້ອມທ່າດອກຄຳ 8 ແລະ 11, ແຕ່ຍັງບໍ່ທັນກວ້າງຂວາງ. ແນວພັນເຂົ້າຈ້າວ ດັ່ງກ່າວ ແມ່ນມີທ່າແຮງໃນການຜະລິດປ້ອນໂຮງງານເບຍ ແລະ ປຸງແຕ່ງເຮັດເສັ້ນໝີ່, ເສັ້ນເຝີ ແລະ ເຂົ້າປຸ້ນ.

ນອກຈາກບັນດາແນວພັນທີ່ກ່າວມາຂ້າງເທິງແລ້ວ, ມາຮອດປັດຈຸບັນ, ພວກເຮົາສາມາດຄັດໄດ້ ແນວພັນເຂົ້າໜຽວ

ໃໝ່ໃຫ້ຜົນຜະລິດສູງ 1 ແນວພັນ ຊຶ່ງເປັນລູກປະສົມ ທ່າດອກຄຳ ແລະ ອີກ 2 ແນວພັນຫອມ ທ່າດອກຄຳ ກຽມເອົາອອກສູ່ການຜະລິດ ໃນລະດູແລ້ງ ປີ 2011 ເປັນຕົ້ນໄປ.

### ການຜະລິດເມັດພັນເຂົ້າ

| ປີ | ເຂົ້ານາ (ກລກ) | | | ເຂົ້າໄຮ່ (ກລກ) |
|---|---|---|---|---|
| | ບໍລິສຸດ | ລຸ້ນ 1 | ລຸ້ນ 2 | |
| 2005-2006 | 2,290 | 51,715 | - | 554 |
| 2006-2007 | 1,200 | 63,133 | - | 2,391 |
| 2007-2008 | 1,239 | 61,714 | 15,000 | 2,225 |
| 2008-2009* | 348 | 26,274 | 150,300 | 10,560 |
| 2009-2010** | 337 | 15,317 | 101,000 | - |
| ລວມ = | 5,414 | 218,153 | 266,300 | 15,730 |

*   =   *ຖືກນ້ຳຖ້ວມ + ຊົນລະປະທານເປ່ເພ*

**   =   *ລະດູຝົນ 2009 (ລະດູດຽວ)*

### 2. ການຄົ້ນຄວ້າ ແລະ ຂະຫຍາຍແນວພັນສາລີ

ແຕ່ກ່ອນການຄົ້ນຄວ້າສາລີ ແລະ ຖົ່ວ ແມ່ນໄດ້ດຳເນີນຢູ່ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ ຫາດດອກແກ້ວ ຜ່ານການສ້າງຕັ້ງ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ໃນປີ 1999, ກິດຈະກຳດັ່ງກ່າວ ໄດ້ໂອນມາໃຫ້ສູນຄົ້ນຄວ້ານາພອກ. ເປົ້າໝາຍການຄົ້ນຄວ້າ ໄດ້ເນັ້ນໃສ່ດັ່ງລຸ່ມນີ້:

**2.1 ຄົ້ນຄວ້າ ແນວພັນສາລີ ເພື່ອການບໍລິໂພກ**: ໂດຍເລີ້ມຈາກການເຕົ້າໂຮມ ແນວພັນສາລີໜຽວພື້ນເມືອງ ນຳມາສຶກສາ ຕີລາຄາ ເພື່ອນຳໃຊ້ ແລະ ສາມາດເລືອກໄດ້ 5 ແນວພັນ. ພ້ອມກັນນັ້ນ ກໍ່ໄດ້ມີການປະສົມພັນ ແລະ ສ້າງແນວພັນສາລີໜຽວ 1 ແນວພັນ ໃສ່ຊື່ "ສາລີໜຽວ ສຄກ 1" ແລະ ໄດ້ເອົາອອກສູ່ການຜະລິດ ເລີ້ມແຕ່ປີ 2003 ເປັນຕົ້ນມາ. ອີກ 1 ແນວພັນ ທີ່ກຽມໃສ່ຊື່ "ສາລີໜຽວ ສຄກ 2". ກຽມຜະລິດເມັດພັນໃນລະດູຝົນ ປີ 2010 ແລະ ຈະເອົາອອກສູ່ການຜະລິດໃນທ້າຍລະດູຝົນ ປີ 2010 ແລະ ລະດູແລ້ງ ປີ 2011. ໃນແຕ່ລະປີທາງສູນຜະລິດ ແລະ ສົ່ງອອກສູ່ການຜະລິດ 2-3 ໂຕນ/ປີ.

**2.2 ຄົ້ນຄວ້າສາລີລູກປະສົມຂອງລາວ (ສາລີແຂງ)**: ທາງສູນໄດ້ຮ່ວມມືກັບ ສະຖາບັນ ຄົ້ນຄວ້າ ສາລີ ວຽດນາມ ເລີ້ມແຕ່ປີ 2002 ເປັນຕົ້ນມາ. ຄຽງຄູ່ກັບການສ້າງນັກປັບປຸງພັນສາລີ, ທາງສູນກໍ່ໄດ້ລິເລີ້ມ ສ້າງສາຍພັນບໍລິສຸດ. ມາຮອດປັດຈຸບັນ ສູນໄດ້ສ້າງສາຍພັນບໍລິສຸດລຸ້ນ 5 ແລະ ລຸ້ນ 6 ມີທັງໝົດ 410 ສາຍພັນ. ສ່ວນການທົດສອບສາຍພັນລູກປະສົມ ຈາກວຽດນາມ ມາຮອດປັດຈຸບັນ ເຫັນວ່າ ມີ 4 ສາຍພັນ ປັບຕົວໄດ້ດີໃນເງື່ອນໄຂສະພາບແວດລ້ອມ ດິນຟ້າອາກາດ ຂອງລາວ ແລະ ຍັງຈະສືບຕໍ່ທົດສອບໄປອີກ 2 ລະດູ ແລະ ຄາດວ່າ ຕົ້ນປີ 2011 ຈະຄັດໃຫ້ໄດ້ 1-2 ແນວພັນ ທີ່ເຫັນວ່າ ມີຄວາມແທດເໝາະທີ່ສຸດ ສຳລັບ ສປປ ລາວ.

### 3. ການຄົ້ນຄວ້າ ແລະ ຂະຫຍາຍແນວພັນພືດ ຕະກຸນຖົ່ວ ແລະ ພືດໃຫ້ຫົວ

**ຖົ່ວເຫຼືອງ**: ໄດ້ນຳເຂົ້າແນວພັນແນະນຳ ຈາກ ວຽດນາມ, ຈີນ ແລະ ໄທ; ແລະ ສາຍພັນທີ່ຍັງມີການກະຈາຍຕົວ ແລະ ຄົງຕົວ ຈາກມະຫາວິທະຍາໄລ ຂອນແກ່ນ ມາປູກທົດລອງການປັບຕົວທີ່ສູນນາພອກ ແລະ ພື້ນທີ່ຂອງຊາວກະສິກອນ ແຂວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ ແລະ ຄັດໄດ້ 2 ແນວພັນ ໃສ່ຊື່ " ຖົ່ວເຫຼືອງ ສຄກ 1 ແລະ ຖົ່ວເຫຼືອງ ສຄກ 2". ໃນລະດູແລ້ງ ປີ 2010 ຈະໄດ້ຂະຫຍາຍ ເມັດພັນລຸ້ນ 2 ທີ່ບ້ານສົມສະໄໝ, ເມືອງໄຊທານີ.

*ຍັງມີຕໍ່ສະບັບໜ້າ*

## ນາງ ເທວາ ອຸ່ນແກ້ວມະນີ ຄອບຄົວຕົວແບບ ໃນການສ້າງເສດຖະກິດຄອບຄົວ



*ໂດຍ: ແສງເພັດ ຍົດລືໄຊ, ສູນຄົ້ນຄວ້າປ່າໄມ້*

ນາງ ເທວາ ອຸ່ນແກ້ວມະນີ ພະນັກງານ ສູນຄົ້ນຄວ້າປ່າໄມ້, ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ຮັບຜິດຊອບຜະລິດເບັ້ຍໄມ້ຂອງສູນ. ນອກຈາກເຮັດວຽກຕາມການຈັດຕັ້ງມອບໝາຍໃຫ້ແລ້ວ, ລາວໄດ້ຢືນຢູ່ຄຽງບ່າຄຽງໄລ່ກັບຄອບຄົວກໍ່ຄືຜູ້ເປັນຜົວ ຊ່ວຍກັນສ້າງເສດຖະກິດຄອບຄົວເພື່ອພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ ຄື: ຜະລິດເບ້ຍໄມ້ອຸດສາຫະກຳ ເຊັ່ນ: ໄມ້ແຕ້ຂ່າ, ໄມ້ຂະຍຸງ, ໄມ້ດູ່, ໄມ້ຄຳພີ, ໄມ້ສັກ, ໄມ້ແຄນເຮືອ, ໄມ້ກະຖິນເທພາ ແລະ ໄມ້ວິກ. ປະເພດໄມ້ປະດັບ ເຊັ່ນ: ໄມ້ສະຝາງ, ນິກຍຸງ, ດູ່ ກິ່ງອ່ອນ,

ໄມ້ຄູນ, ກາລະພຶກ ແລະ ດອກຈຳປາ. ປະເພດເຄື່ອງປ່າຂອງດົງມີ: ໄມ້ເກດສະໜາ, ຢາງບົງແດງ, ຢາງບົງຂາວ, ຫວາຍໂຕ່ນ ແລະ ຫວາຍແຍ້.

ນາງ ເຫວາ ໄດ້ເລີ່ມຜະລິດເບ້ຍໄມ້ ມາແຕ່ປີ 1997, ການຜະລິດ ແມ່ນອີງຕາມລູກຄ້າສັ່ງຈອງ ແລະ ຄວາມນິຍົມຂອງຕະຫຼາດໃນຊ່ວງນັ້ນ. ໃນແຕ່ລະປີ ລາວຈະຜະລິດເບ້ຍໄມ້ບໍ່ຕ່ຳກວ່າ 50,000-60,000 ເບ້ຍ ສະເລ່ຍລາຍຮັບຕ່ຳສຸດ 20,000,000-30,000,000 ກີບ/ປີ, ບາງປີຜະລິດໄດ້ຫຼາຍແມ່ນ 80,000-100,000 ເບ້ຍ ສະເລ່ຍລາຍຮັບສູງສຸດປະມານ 50,000,000-60,000,000 ກີບ/ປີ ຊຶ່ງລາຍຮັບດັ່ງກ່າວໄດ້ປະກອບສ່ວນອັນສຳຄັນທີ່ສຸດ ໃນການຍົກລະດັບຊີວິດການເປັນຢູ່ ກໍ່ຄືຖານະຄອບຄົວ ໃຫ້ດີຂຶ້ນກວ່າເກົ່າ. ລາວສາມາດປຸກເຮືອນໃໝ່, ສົ່ງເສຍໃຫ້ລູກທັງ 3 ໄດ້ເຂົ້າຮຽນຈົບຈົບ ມີວິຊາອາຊີບ. ຄຽງຄູ່ໄປກັບການຜະລິດດັ່ງກ່າວ ທີ່ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ ມີຖານະດີຂຶ້ນກໍ່ຕາມ ແຕ່ບາງປີກໍ່ພົບບັນຫາ ແລະ ຂໍ້ຫຍຸ້ງຍາກ ໃນການຜະລິດ ຄື: ຜະລິດໄດ້ຫຼາຍ ແຕ່ບໍ່ມີຕະຫຼາດຮອງຮັບ, ການຜະລິດເບ້ຍໄມ້ ແຕ່ລະປີ ບໍ່ມີຜູ້ມາສັ່ງຈອງ ຫຼື ບອກລ່ວງໜ້າ ວ່າ ຕ້ອງການໄມ້ຊະນິດໃດ ຫຼາຍປານໃດ. ໃນບາງປີ ຈຳນວນທີ່ຜະລິດມານັ້ນລູກຄ້າບໍ່ຕ້ອງການ ແຕ່ມີຄວາມຕ້ອງການຊະນິດອື່ນ ທີ່ບໍ່ໄດ້ຜະລິດ ເຮັດໃຫ້ລາຍຮັບແຕ່ລະປີ ບໍ່ສະໝໍ່າສະເໝີ.



ນາງ ເຫວາ ອຸ່ນແກ້ວມະນີ ໄດ້ສະແດງຄວາມຮູ້ບຸນຄຸນມາຍັງ ພັກ-ລັດ ກໍ່ຄືອຳນາດການປົກຄອງທຸກຂັ້ນ ທີ່ໃຫ້ຄວາມສະດວກແກ່ຄອບຄົວ ໃນການປະກອບສ່ວນເຂົ້າໃນ ວຽກງານຂອງ ພັກ-ລັດ ກໍ່ຄືວຽກງານວິຊາສະເພາະ ທີ່ຕົນເອງຮັບຜິດຊອບ ອັນໄດ້ເຮັດໃຫ້ລາວໄດ້ນຳເອົາບົດຮຽນ ແລະ ປະສົບການທີ່ມີ ມາໝູນໃຊ້ເຂົ້າໃນການສ້າງເສດຖະກິດ ຄອບຄົວໃຫ້ເປັນປະໂຫຍດ ເຮັດໃຫ້ຊີວິດຄອບຄົວດີຂຶ້ນ, ມີຫຼັກປະກັນຊີວິດຄອບຄົວທີ່ໝັ້ນຄົງ.

## ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ຫັນພະນັກງານ ລົງສູ່ຮາກຖານ ເພື່ອສ້າງຜົນງານ ຂ່ຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຄະນະພັກຮາກຖານ

*ໂດຍ: ພູທອນ ໂສພາທິລາດ, ພະແນກແຜນການ, ສຄກປ*

ວຽກງານການກໍ່ສ້າງພັກ ແລະ ພະນັກງານ ເປັນວຽກງານບູລິມະສິດອັນນຶ່ງ ຂອງຄະນະພັກຮາກຖານ ສະຖາບັນ ແນໃສ່ເຮັດໃຫ້ວຽກງານ ຄົ້ນຄວ້າທົດລອງ ກະສິກຳ ປ່າໄມ້ ມີການຊີ້ນຳນຳພາທີ່ຖືກຕ້ອງ ສອດຄ່ອງ ຕາມແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດສັງຄົມ ຂອງລັດຖະບານກໍ່ຄືຍຸດທະສາດ ການພັດທະນາຂະແໜງການ ກະສິກຳ ແລະ ປ່າໄມ້. ຍ້ອນຄວາມເອົາໃຈໃສ່ ຢ່າງຕັ້ງໜ້າຂອງຄະນະພັກ ແລະ ການນຳວຽກງານ ຂະຫຍາຍພັກ ໃນ ສຄກປ ຈຶ່ງໄດ້ມີທ່າກ້າວຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ. ໃນທີ່ສຸດໜ່ວຍພັກສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ໄດ້ຮັບການອະນຸມັດ ໃຫ້ເປັນຄະນະພັກຮາກຖານ ຕາມມະຕິຕົກລົງ ຂອງຄະນະພັກ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການອະນຸມັດ ສ້າງຕັ້ງຄະນະພັກຮາກຖານ ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ສະບັບເລກທີ 0174/ຄພ.ກປ, ລົງວັນທີ 21/10/2009.

ເພື່ອເປັນການສ້າງຜົນງານ ຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄະນະພັກຮາກຖານ ຄັ້ງທີ 1 ທີ່ຈະຈັດຂຶ້ນໃນທ້າຍເດືອນພຶດສະພາ 2010 ນີ້, ຄະນະພັກຮາກຖານ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພ້ອມດ້ວຍ 6 ໜ່ວຍພັກ ທີ່ຂຶ້ນກັບໄດ້ເປີດບັ້ນແຂ່ງຂັນສ້າງຜົນງານຕາມຄາດໝາຍແຜນການທີ່ຕັ້ງໄວ້. ນຶ່ງໃນບັນດາມາດຕະການທີ່ນຳໃຊ້ ເພື່ອເຮັດໃຫ້ສາມາດບັນລຸຜົນ ຕາມຄາດໝາຍສູ້ຊົນ, ຄະນະພັກຮາກຖານສະຖາບັນ ໄດ້ຫັນເອົາສະມາຊິກພັກ ແລະ ພະນັກງານສົ່ງສູ່

ຮາກຖານ ເພື່ອລົງເລິກຊີ້ນຳ ນຳພາວຽກງານ ຄົ້ນຄວ້າ ເພື່ອການພັດທະນາ ກະສິກຳ ແລະ ປ່າໄມ້ ໃນເຂດເມືອງ ແລະ ກຸ່ມບ້ານເປົ້າໝາຍ ຂອງບັນດາໂຄງການຄົ້ນຄ້ວາ ທີ່ຂຶ້ນກັບສະຖາບັນ.



ປະຕິບັດຕາມມາດຕະການ ດັ່ງກ່າວ, ເພື່ອເປັນການຕິດຕາມຊຸກຍູ້ ແລະ ຊີ້ນຳວຽກງານການຄົ້ນຄວ້າ ໃນຂັ້ນຮາກຖານ ໃຫ້ປະກົດຜົນເປັນຈິງ, ທ່ານ ດຣ. ບຸນຖອງ ບົວຫອມ, ເລຂາຄະນະພັກຮາກຖານ, ຫົວໜ້າ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ພ້ອມດ້ວຍຜູ້ປະສານງານ ໂຄງການຄົ້ນຄວ້າ ເຂດພູດອຍ ແລະ ພັດທະນາຄວາມສາມາດ (URDP) ແລະ ພະນັກງານຫຼັກແຫຼ່ງຈຳນວນນຶ່ງ ໄດ້ລົງຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດ ວຽກງານການຄົ້ນຄວ້າ ຂອງ ໂຄງການ URDP ທີ່ ເມືອງໂພນທອງ ແລະ ເມືອງ ໂພນໄຊ, ແຂວງຫຼວງພະບາງ, ໃນຄັ້ງວັນທີ 19-20 ເດືອນ ມີນາ 2010 ທີ່ຜ່ານມາ.

ໃນການຢ້ຽມຢາມຄັ້ງນີ້, ຄະນະການນຳ ສະຖາບັນ ໄດ້ສົມທົບກັບອຳນາດການປົກຄອງເມືອງ, ຜູ້ປະສານງານ ໂຄງການຂັ້ນເມືອງ ໄດ້ລົງຢ້ຽມຢາມ ກິດຈະກຳ ການຄົ້ນຄວ້າ ຂອງໂຄງການ ທີ່ເຮັດຮ່ວມກັບຊາວກະສິກອນ ຫຼາຍຢ່າງ, ລວມທັງການຢ້ຽມຢາມ ສູນບໍລິການເຕັກນິກ ແຫ່ງຕ່າງໆ ທີ່ໂຄງການໄດ້ໃຫ້ການສະນັບສະໜູນ ໃນການສ້າງຕັ້ງ ແລະ ການສ້າງຄວາມສາມາດ, ພ້ອມທັງໄດ້ສົມທົບແລກປ່ຽນກັບອຳນາດການປົກຄອງບ້ານ ແລະ ກຸ່ມຜະລິດ ອີກດ້ວຍ.

ຜ່ານການຢ້ຽມຢາມ ວຽກງານພາກສະໜາມ ໃນຄັ້ງນີ້ ສາມາດຕີລາຄາໄດ້ວ່າ, ໂດຍພື້ນຖານ, ການຈັດຕັ້ງປະຕິບັດກິດຈະກຳ ການຄົ້ນຄວ້າ ຮ່ວມກັບປະຊາຊົນຫຼາຍຢ່າງ ມີຄວາມຄືບໜ້າດີ, ຖືກຕ້ອງສອດຄ່ອງ ກັບເງື່ອນໄຂທຳມະຊາດ ແລະ ເສດຖະກິດ ສັງຄົມ ຂອງທ້ອງຖິ່ນ ແລະ ເປັນທີ່ຍອມຮັບ ຂອງອຳນາດການປົກຄອງ ແລະ ຊາວກະສິກອນ. ມາເຖິງໄລຍະນີ້, ຜົນການຄົ້ນຄວ້າ ຫຼາຍຢ່າງ ສາມາດກາຍເປັນຕົວແບບທາງເລືອກ ໃນການປ່ຽນແທນອາຊີບ ຖາງປ່າເຮັດໄຮ່, ສ້າງລາຍຮັບໃຫ້ແກ່ຄອບຄົວ ຊາວກະສິກອນ ໄດ້ເປັນຢ່າງດີ.

ຈາກຫຼາຍໆກິດຈະກຳ ການຄົ້ນຄວ້າ ທົດລອງ ທີ່ທາງໂຄງການໄດ້ຈັດຕັ້ງປະຕິບັດ ຮ່ວມກັບ ປະຊາຊົນ, ເຫັນໄດ້ວ່າ ການຄົ້ນຄວ້າຮູບແບບການລ້ຽງງົວ ປະສົມປະສານ ກັບການປູກຫຍ້າອາຫານສັດ, ການປູກພືດຜັກ (ກະລໍ່າປີ ແລະ ໝາກເລັ່ນ) ນອກລະດູ ເປັນສິນຄ້າ ແລະ ການລ້ຽງປາໃນໜອງ ປະສົມປະສານກັບການລ້ຽງສັດນ້ອຍ ຕິດພັນກັບການຄົ້ນຄວ້າກົນໄກການຈັດຕັ້ງກຸ່ມຜະລິດ ແລະ ການສ້າງ ແລະ ປັບປຸງສູນບໍລິການເຕັກນິກ ປະຈຳກຸ່ມບ້ານ ໄດ້ກາຍເປັນວຽກງານທີ່ພົ້ນເດັ່ນ ຂອງໂຄງການ ແລະ ເປັນທີ່ນິຍົມຂອງອຳນາດການປົກຄອງ ແລະ ປະຊາຊົນ ຢູ່ໃນ 2 ເມືອງຈຸດສຸມ. ຜົນສຳເລັດນີ້ ສາມາດພິສູດໄດ້ ຈາກຄວາມສົນໃຈ ໃນການເຂົ້າຮ່ວມ ແລະ ຜັນຂະຫຍາຍ ຂອງຊາວກະສິກອນພາຍຫຼັງ ທີ່ເຫັນໄດ້ຜົນສຳເລັດໃນຂັ້ນຕົ້ນ. ຕົວຢ່າງ ທີ່ສະແດງອອກໃຫ້ເຫັນໄດ້ເດັ່ນທີ່ສຸດ ແມ່ນການຈັດຕັ້ງກຸ່ມ ລ້ຽງງົວ ຢູ່ກຸ່ມບ້ານໂພນທອງ, ເມືອງໂພນໄຊ ແລະ ການຈັດຕັ້ງກຸ່ມປູກພືດຜັກເປັນສິນຄ້າ ຢູ່ ກຸ່ມບ້ານນາບໍ່, ເມືອງໂພນໄຊ ແລະ ການລ້ຽງປາ ຢູ່ ບ້ານປຸ່ງຮ້ອນ, ເມືອງໂພນທອງ, ແຂວງຫຼວງພະບາງ.

ພິເສດ, ໃນການລົງໄປຕິດຕາມ ການເຄື່ອນໄຫວຂອງກຸ່ມລ້ຽງງົວ ຢູ່ ກຸ່ມບ້ານໂພນທອງ, ເມືອງໂພນໄຊ ໃນຄັ້ງນີ້, ທ່ານ ຄຳຫຼ້າ ລຽນປະດິດ, ເຈົ້າເມືອງໂພນໄຊ ທີ່ເຂົ້າຮ່ວມຄະນະ ໄດ້ສະແດງເຖິງຄວາມເພິ່ງພໍໃຈ ຕໍ່ຜົນສຳເລັດໃນເບື້ອງຕົ້ນຂອງກຸ່ມລ້ຽງງົວດັ່ງກ່າວ ແລະ ຕີລາຄາວ່າ ມັນເປັນໂຄງການ



ບຸກເບີກທຳອິດ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ທີ່ເຂົ້າມາມີບົດບາດ ລິເລີ້ມຊ່ວຍເຫຼືອເມືອງ ໃນການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃນເຂດຫ່າງໄກສອກຫຼີກ ຂອງ ເມືອງໂພນໄຊ ຊຶ່ງເປັນເມືອງນຶ່ງ ໃນບັນດາ 47 ເມືອງ ທຸກຍາກ ຂອງປະເທດ.

ຈາກການຖອດຖອນບົດຮຽນໃນຄັ້ງນີ້, ໄປພ້ອມກັນກັບການສືບຕໍ່ຄົ້ນຄວ້າທາງເລືອກໃໝ່ ຕາມຄວາມຈຳເປັນ, ການນຳສະຖາບັນ ໄດ້ຊີ້ນຳໃຫ້ທາງໂຄງການ ຄົ້ນຄວ້າ ເຂດພູດອຍ ແລະ ພັດທະນາຄວາມສາມາດ ຫັນທິດໄປສຸມໃສ່ວຽກງານຄົ້ນຄວ້າ ກ່ຽວກັບກົນໄກການສະໜັບສະໜູນການສົ່ງເສີມກະສິກຳ, ເປັນຕົ້ນ ແມ່ນການສຶກສາຄົ້ນຄວ້າກົນໄກການຕະຫຼາດ, ການສ້າງມູນຄ່າເພີ້ມແກ່ຜົນຜະລິດ ກະສິກຳ ແລະ ການສຶກສາ ຄົ້ນຄວ້າ ກ່ຽວກັບວຽກງານນະໂຍບາຍກະສິກກຳ ແລະ ປ່າໄມ້ ອື່ນໆ. ນອກນັ້ນ, ວຽກບູລິມະສິດອີກຢ່າງນຶ່ງທີ່ສຳຄັນ ແມ່ນສຸມໃສ່ການເຜີຍແຜ່ຮູບແບບການຜະລິດ ທີ່ເຫັນຜົນໃນຂັ້ນຕົ້ນ ເພື່ອຜັນຂະຫຍາຍ ອອກສູ່ວົງກວ້າງ ໂດຍການນຳໃຊ້ວິທີການ ແລະ ຮູບການ ຜ່ານສື່ຕ່າງໆ, ບໍ່ວ່າຈະເປັນການຈັດການຢ້ຽມຊົມ ໃຫ້ພະນັກງານການນຳ ຂັ້ນຕ່າງໆ, ການຈັດທັດສະນະສຶກສາ ໃຫ້ແກ່ນັກສົ່ງເສີມ ແລະ ກຸ່ມຊາວກະສິກອນ, ການສ້າງແຜ່ນພັບ ຂໍ້ມູນດ້ານນະໂຍບາຍ, ການເຜີຍແຜ່ຜ່ານໜັງສືພິມ, ຜ່ານລາຍການວິທະຍຸ, ໂທລະພາບ ແລະ ອື່ນໆ.



## ກອງປະຊຸມໃຫ່ຍຄັ້ງທີ I ຂອງ ໜ່ວຍພັກ ສູນຄົ້ນຄວ້າ ການນຳໃຊ້ທີ່ ດິນກະສິກຳ ແລະ ສູນນິເວດ ກະສິກຳ ໄດ້ເປີດຂຶ້ນ ແລະ ປິດລົງດ້ວຍຜົນສຳເລັດອັນຈົບງາມ

*ໂດຍ: ອະໂນລາດ ຈັນທະວົງສາ,*
*ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ປ່າໄມ້*

ກອງປະຊູມໃຫຍ່ ຄັ້ງທີ I ຂອງໜ່ວຍພັກ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ສູນນິເວດ ກະສິກຳ ໄດ້ຈັດຂຶ້ນຢ່າງເປັນທາງການ ທີ່ຫ້ອງປະຊຸມຂອງສູນ ໃນຕອນບ່າຍ ເວລາ 13:30-15:45 ໂມງ ຂອງວັນທີ 06/04/2010 ໂດຍ ໄດ້ຮັບກຽດເປັນປະທານ ຂອງ ສະຫາຍ ດຣ. ບຸນຖອງ ບົວຫອມ ຄະນະພັກ ກະຊວງ ເລຂາຄະນະພັກ ຮາກຖານ ສຄກປ ແຫ່ງຊາດ ເປັນກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີຄະນະພັກ ສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ສູນນິເວດ ກະສິກຳ, ບັນດາຫົວໜ້າຈຸ, ຮອງຈຸ, ສະມາຊິກສົມບູນ, ສຳຮອງ ແລະ ຕ່າງໜ້າສາມອົງການຈັດຕັ້ງມະຫາຊົນ ຕະຫຼອດເຖິງບັນດາອ້າຍເອື້ອຍນ້ອງພະນັກງານ ເຂົ້າຮ່ວມທັງໝົດ 40 ສະຫາຍ, ຍິງ 7 ສະຫາຍ, ໃນນີ້ ມີແຂກຖືກເຊີນເຂົ້າຮ່ວມ ຈຳນວນ 19 ສະຫາຍ ຍິງ 4 ສະຫາຍ ສະມາຊິກສົມບູນ ຈຳນວນ 13 ສະຫາຍ, ສຳຮອງ 3 ສະຫາຍ, ຍິງ 1 ສະຫາຍ.

### ຈຸດປະສົງ ຂອງກອງປະຊຸມ

ເພື່ອສັງເກດຕີລາຄາ ການເຄື່ອນໄຫວໃນໄລຍະຜ່ານມາ ກຳນົດທິດທາງ ແຜນການເຄື່ອນໄຫວ ໃນຕໍ່ໜ້າ ແລະ ຄັດເລືອກເອົາຄະນະຊຸດໃໝ່.

### ເນື້ອໃນຂອງກອງປະຊຸມ

1. ກອງປະຊຸມ ໄດ້ຮັບຮອງເອົາ ບົດລາຍງານການເມືອງ ຂອງໜ່ວຍພັກ ສູນຄົ້ນຄວ້າການນຳ ໃຊ້ທີ່ດິນ ກະສິກຳ ແລະ ສູນນິເວດກະສິກຳ ຢ່າງເປັນເອກະສັນ.



2. ກອງປະຊຸມ ໄດ້ດຳເນີນການປ່ອນບັດ ເລືອກຕັ້ງຄະນະໜ່ວຍພັກສູນຄົ້ນຄວ້າ ການນຳໃຊ້ທີ່ດິນ ກະສິກຳ ແລະ ສູນນິເວດ ກະສິກຳ ຊຸດໃໝ່.

3. ກ້ອງປະຊຸມ ໄດ້ຮັບຟັງ ການໂອ້ລົມຂອງ ສະຫາຍ ດຣ. ບຸນຖອງ ບົວຫອມ ຄະນະພັກ ກະຊວງ, ເລຂາຄະນະພັກຮາກຖານ ສຄກປ ແຫ່ງຊາດ.

4. ກອງປະຊຸມໄດ້ຮຽກຮ້ອງໃຫ້ບັນດາສະມາຊິກພັກ, ພະນັກງານ ລັດຖະກອນ ໃຫ້ເອົາໃຈໃສ່ ປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ I ໃຫ້ປະກົດຜົນເປັນຈິງ.

ກອງປະຊຸມໃນຄັ້ງນີ້ ມີເນື້ອໃນ ແລະ ຄວາມໝາຍອັນກວ້າງຂວາງ, ເລິກເຊິ່ງ ແລະ ຈະແຈ້ງດີ ທີ່ເປັນທິດນຳອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງພັກ ໃນການເພີ່ມທະວີບົດບາດ ການນຳພາ ແລະ ຄວາມຮັບຜິດຊອບ ຂອງພັກ, ແນໃສ່ເພື່ອສ້າງໜ່ວຍພັກ ໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ, ແນວຄິດການຈັດຕັ້ງ ແລະ ແບບແຜນວິທີນຳພາ, ສ້າງໜ່ວຍພັກແຂງຮູ້ນຳພາຮອບດ້ານ. ກອງປະຊຸມດັ່ງກ່າວແມ່ນໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ ແລະ ໄດ້ປິດລົງໃນວັນດຽວກັນ.

## ກອງປະຊຸມໃຫຍ່ ຄັ້ງທີ VI ໜ່ວຍພັກສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ



*ໂດຍ: ບັນທະສັກ ວິງພູທອນ,*
*ສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ພາກເໜືອ*

ໃນວັນທີ 6 ມີນາ 2010 ທີ່ຜ່ານມາ ຢູ່ຫ້ອງປະຊຸມ ຂອງສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ (ຕັ້ງຢູ່ບ້ານຫ້ວຍໂຄດ ເມືອງຊຽງເງິນ), ໄດ້ເປີດກອງປະຊຸມໃຫຍ່ຄັ້ງທີ VI ຂອງ ໜ່ວຍພັກ ສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ, ໂດຍການເຂົ້າຮ່ວມ ເປັນປະທານ ຂອງສະຫາຍ ສົມພົງ ປຣະດິຈິດ ເລຂາຄະນະພັກຮາກຖານ, ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງຫຼວງພະບາງ, ມີບັນດາສະມາຊິພັກສົມບູນ ເຂົ້າຮ່ວມ ຈຳນວນ 20 ສະຫາຍ, ຍິງ 3 ສະຫາຍ ພ້ອມດ້ວຍແຂກທີ່ຖືກເຊີນ ຈຳນວນ 15 ຄົນ, ຍິງ 6 ຄົນ.

ໃນພິທີດັ່ງກ່າວ ສະຫາຍ ທຸມຈິດສະຫວາດ ໂສດາຮັກ ເລຂາໜ່ວຍພັກ ສູນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ ໄດ້ຂຶ້ນຜ່ານບົດລາຍງານການເມືອງ ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ V (ປີ 2004-2009) ແລະ ໝາກຜົນທີ່ພົ້ນເດັ່ນ ໃນການຈັດຕັ້ງປະຕິບັດວຽກງານ ຂອງ ໜ່ວຍພັກສູນ ເຊິ່ງມັນໄດ້ສະແດງອອກ ໃຫ້ເຫັນຜົນສຳເລັດຫຼາຍດ້ານ ຄື:

1. ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນວຽກງານສຶກສາອົບຮົມທາງດ້ານແນວຄິດການເມືອງ ແລະ ເຜີຍແຜ່ ແນວທາງນະໂຍບາຍ ຂອງ ພັກ-ລັດ ໃຫ້ບັນດາສະມາຊິກພັກ.

2. ໄດ້ເຄື່ອນໄຫວ ແລະ ເອົາໃຈໃສ່ທາງດ້ານວິຊາສະເພາະ ເປັນຕົ້ນແມ່ນການຄົ້ນຄວ້າ ເພື່ອຂະຫຍາຍແນວພັນ, ການຄົ້ນຄວ້າ ເພື່ອຊອກຫາເຕັກນິກການຜະລິດ ແລະ ການຂະຫຍາຍຜົນສຳເລັດ ຂອງ ການຄົ້ນຄວ້າ ທາງດ້ານກະສິກຳ ແລະ ປ່າໄມ້.

3. ເອົາໃຈໃສ່ໃນວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ປ້ອງກັນພັກ ແລະ ພະນັກງານຢ່າງແຂງແຮງໂດຍແບ່ງອອກເປັນ 2 ຈຸຍາມ ຄື: ທີ່ຫ້ອງການໃຫ່ຍ ສູນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ພາກເໜືອ ແລະ ສະຖານີກະສິກຳ ແລະ ປ່າໄມ້ ທົ່ງຄັ່ງ.

4. ໄດ້ຊີ້ນຳນຳພາ ການເຄື່ອນໄຫວ ຂອງ 3 ອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ) ໃນການອອກແຮງງານ ແລະ ສ້າງຂະບວນການຕ່າງໆ ຊຶ່ງມັນໄດ້ສະແດງອອກ ໃນການໄດ້ຮັບການຍ້ອງຍໍ ດັ່ງນີ້:

### ໜ່ວຍກຳມະບານ

- ໄດ້ຮັບການຍ້ອງຍໍ ຈາກສູນກາງສະຫະພັນກຳມະບານລາວ 1 ໃບ.
- ໄດ້ຮັບການຍ້ອງຍໍ ຈາກສະຫະພັນກຳມະບານແຂວງ 1 ໃບ.
- ສະມາຊິກກຳມະບານ ໄດ້ຮັບການຍ້ອງຍໍ ຈາກສະຫະພັນກຳມະບານລາວ ຈຳນວນ 19 ສະຫາຍ.

- ສະມາຊິກກຳມະບານ ໄດ້ຮັບການຍ້ອງຍໍ ຈາກສະຫະພັນກຳມະບານແຂວງ ຈຳນວນ 10 ສະຫາຍ.
- ໜ່ວຍຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮັບການຍ້ອງຍໍ ຈາກ ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດ ລາວ 2 ໃບ ແລະ ຄະນະບໍລິຫານງານຊາວໜຸ່ມແຂວງ 1 ໃບ.
- ສະມາຊິກຊາວໜຸ່ມ ໄດ້ຮັບການຍ້ອງຍໍຈາກສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດ ລາວ ຈຳນວນ 47 ສະຫາຍ, ຍິງ 20 ສະຫາຍ ແລະ ໃບຍ້ອງຍໍຈາກຄະນະບໍລິຫານງານຊາວໜຸ່ມແຂວງ 22 ສະຫາຍ, ຍິງ 7 ສະຫາຍ.

### ຈຸສະຫະພັນແມ່ຍິງ

ໄດ້ຮັບການຍ້ອງຍໍ ປະເພດ ທີ 1 ຈາກ ສະຫະພັນແມ່ຍິງແຂວງ ຈຳນວນ 12 ສະຫາຍ.

ໃນໄລຍະທີ່ຜ່ານມາ ໜ່ວຍພັກ ສາມາດໄດ້ໜ່ວຍພັກແຂງ 3 ສະໄໝ ຕິດຕໍ່ກັນ ຄື ປີ 2006, 07, 08. ໃນການຂະຫຍາຍສະມາຊິກພັກ ພວກເຮົາຖືເອົາການປັບປຸງຄຸນນະພາບຂອງສະມາຊິກພັກ ເປັນຕົ້ນຕໍ ໄປພ້ອມກັບການຂະຫຍາຍ ສະມາຊິກພັກ ໂດຍເລັ່ງໃສ່ພະນັກງານຜູ້ໜຸ່ມນ້ອຍ ທີ່ມີຄວາມຮູ້ ຄວາມສາມາດ ແລະ ພະນັກງານຫຼັກແຫຼ່ງ ໃນໜ່ວຍງານຕ່າງໆ, ໃນນີ້ ສາມາດຂະຫຍາຍສະມາຊິກພັກໄດ້ ຈຳນວນ 8 ສະຫາຍ ເປັນ ຍິງ 2 ສະຫາຍ.

ຜ່ານການເຄື່ອນໄຫວ ວຽກງານຕົວຈິງ ພວກເຮົາສາມາດຕີລາຄາ ແລະ ຈັດປະເພດ ສະມາຊິກພັກໄດ້ ດັ່ງນີ້:

### ປະເພດສະມາຊິກພັກ

- ປະເພດແຂງຮອບດ້ານ ມີ 13 ສະຫາຍ, ຍິງ 0 ສະຫາຍ
- ປະເພດແຂງ 7 ສະຫາຍ, ຍິງ 3 ສະຫາຍ.

## ໜ່ວຍກຳມະບານ ຮາກຖານ ສຄກປ ເຂົ້າຮ່ວມຂະບວນການ ແຂ່ງຂັນກິລາ

*ໂດຍ: ຂັນຄຳ ອ້ວນອຸດົມ,*
*ສູນຂໍ້ມູນຂ່າວສານ*

ເພື່ອຄຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງ ສະຫະພັນກຳມະບານ ກະຊວງ ກະສິກຳ ແລະ ປ່າໄມ້ ທີ່ຈະໄດ້ຈັດຂຶ້ນ ໃນກາງເດືອນ ພຶດສະພາ 2010 ນີ້ ແລະ ວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ ຄົບຮອບ 55 ປີ. ສະຫະພັນກຳມະບານ ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ຈັດການແຂ່ງຂັນ


ພາບໂດຍ: ຂັນຄຳ ອ້ວນອຸດົມ

ກິລາ ເພື່ອຊີງລາງວັນ ເອົາຂັນ ຂອງ ເລຂາຄະນະພັກ ກະຊວງ ກະສິກຳ ແລະ ປ່າໄມ້ ຂຶ້ນ. ການແຂ່ງຂັນ ມີ 3 ປະເພດກິລາ ຄື: 1) ກິລາບານເຕະ, 2) ເປຕັງ ແລະ 3) ຕີດອກປີກໄກ່. ໜ່ວຍກຳມະບານຮາກຖານ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ກໍ່ໄດ້ເຂົ້າຮ່ວມການແຂ່ງຂັນດັ່ງກ່າວ ຊຶ່ງສາມາດຊີງເອົາຂັນລາງວັນໄດ້ທັງໝົດ 3 ຂັນ (ລາງວັນປະເພດນຶ່ງ 2 ຂັນ ແລະ ປະເພດສອງ 1 ຂັນ).

ການແຂ່ງຂັນກິລາ ດັ່ງກ່າວ ໄດ້ເລີ່ມຂຶ້ນແຕ່ວັນທີ 2 ເມສາ 2010 ແລະ ໄດ້ປິດລົງ ໃນວັນທີ 9 ເມສາ 2010, ພິທີການເປີດ ແລະ ປິດ ການແຂ່ງຂັນ ແມ່ນໄດ້ຈັດຂຶ້ນ ທີ່ ເດີ່ນກິລາ ຂອງ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ. ໃນມື້ສຸດທ້າຍຂອງການແຂ່ງຂັນກິລາ, ກ່ອນພິທີມອບຂອງລາງວັນ ໄດ້ມີການແຂ່ງຂັນກິລາປະເພດບານເຕະ 2 ຄູ່ ຄື: ຄູ່ທີ 1 ແມ່ນການແຂ່ງຂັນລະຫວ່າງ ທີມກິລາ ຈາກ ກົມຊົນລະປະທານ ພົບກັບ ກົມປ່າໄມ້ ເພື່ອຊີງເອົາລາງວັນທີ 3. ຜົນຂອງການແຂ່ງຂັນ ແມ່ນກົມປ່າໄມ້ ເອົາຊະນະ ກົມຊົນລະປະທານ 2 ຕໍ່ 0 ແລະ ອີກນຶ່ງຄູ່ແມ່ນການແຂ່ງຂັນ ລະຫວ່າງ ກົມປູກຝັງ ແລະ ສະຖາ ບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ເພື່ອຊີງເອົາລາງວັນທີ 1. ຜົນຂອງການແຂ່ງຂັນ ແມ່ນກົມປູກຝັງ ເອົາຊະນະ ສະຖາບັນໄດ້ແບບຈຸດອິດ ຄື: 1 ຕໍ່ 0.

ພາຍຫຼັງສິ້ນສຸດການແຂ່ງຂັນກິລາ ໄດ້ມີພິທີມອບຂັນລາງວັນ ໃຫ້ແກ່ນັກກິລາແຕ່ລະປະເພດ ທີ່ຊະນະເລີດ ນັບແຕ່ປະເພດ 1 ຫາ ປະເພດ 3. ເປັນກຽດມອບຂັນລາງວັນ ທີ 1 ຂອງ ກິລາແຕ່ລະປະເພດ ໂດຍ ທ່ານ ສີຕາເຮັ້ງ ຣາຊະພົນ, ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້, ເປັນກຽດມອບຂັນລາງວັນ ທີ 2 ໂດຍ ທ່ານ ດຣ. ມົນທາທິບ ຈັນເພັງໄຊ, ປະທານ ສະຫະພັນກຳມະບານ ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ເປັນກຽດມອບຂັນລາງວັນ ທີ 3 ໂດຍ ທ່ານ ທອງພັດ ວົງມະນີ, ຫົວໜ້າ ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ.



ພາບໂດຍ: ຂັນຄຳ ອ້ວນອຸດົມ

ຜົນຂອງການແຂ່ງຂັນກິລາ ແຕ່ລະປະເພດມີ ດັ່ງນີ້: ກິລາບານເຕະ: ລາງວັນທີ 1 ກົມປູກຝັງ, ລາງວັນທີ 2 ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ແລະ ລາງວັນທີ 3 ກົມປ່າໄມ້. ກິລາດອກປີກໄກ່: ລາງວັນທີ 1 ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ລາງວັນທີ 2 ກົມຊົນລະປະທານ ແລະລາງວັນທີ 3 ກົມປ່າໄມ້. ກິລາເປຕັງ: ລາງວັນທີ 1 ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ, ລາງວັນທີ 2 ກົມລ້ຽງສັດ ແລະ ລາງວັນທີ 3 ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ.

## ສູນຄົ້ນຄວ້າ ປ່າໄມ້ ສະເຫຼີມສະຫຼອງວັນບຸນປີໃໝ່ລາວ



ພາບໂດຍ: ຂັນຄຳ ອ້ວນອຸດົມ

*ໂດຍ: ແສງເພັດ ຍົດລືໄຊ, ສູນຄົ້ນຄວ້າປ່າໄມ້*

ເພື່ອຄຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ກະຊວງ ກະສິກຳ ແລະ ປ່າໄມ້, ໃນຕອນເຊົ້າ ຂອງວັນທີ 10/4/2010 ເວລາ 9.00 ໂມງ ສູນຄົ້ນຄວ້າ ປ່າໄມ້ ແລະ ສູນຄົ້ນຄວ້າ ການລ້ຽງສັດ ໄດ້ມີການຈັດກອງ ປະຊຸມໃຫຍ່ ຄັ້ງທີ 1 ຂອງ ໜ່ວຍພັກ ສູນຄົ້ນຄວ້າ ການລ້ຽງສັດ ແລະ ປ່າໄມ້ ທີ່ສູນຄົ້ນຄວ້າ ການລ້ຽງສັດ ເພື່ອຜ່ານບົດລາຍງານ ການເມືອງ 2007-2010 ແລະ ວາງແຜນການທິດທາງນຳພາ ໃນຕໍ່ໜ້າ 2010 - 2012 ແລະ ຄັດເລືອກຄະນະພັກຊຸດໃໝ່ ຂອງ ໜ່ວຍພັກ ສູນຄົ້ນຄ້ວາ ການລ້ຽງສັດ ແລະ ປ່າໄມ້.

ພາຍຫຼັງ ສຳເລັດກອງປະຊຸມແລ້ວ ຈຶ່ງໄດ້ຖືໂອກາດເອົາເວລາອັນສຳຄັນນີ້ ທຳການບາສີສູ່ຂັວນ ສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ລາວ ພ ສ 2553 ເຊິ່ງໄດ້ວຽນມາຮອດອີກວາລະນຶ່ງ. ເພື່ອເປັນການຮັດແໜ້ນຜູກພັນ ຄວາມສາມະຄີ ລະຫວ່າງອ້າຍນ້ອງພະນັກງານ ອ້ອມຂ້າງສະຖາບັນ ຈຶ່ງໄດ້ຈັດພິທີບາສີສູ່ຂວັນສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ລາວຂຶ້ນ ຢູ່ ສູນຄົ້ນຄວ້າ ປ່າໄມ້ (ນ້ຳຊ່ວງ) ໃນເວລາ 11.30 ໂມງ ຂອງວັນດຽວກັນ, ເປັນກຽດ ເຂົ້າຮ່ວມໃນພິທີ ໂດຍ ທ່ານ ສີຕາເຮັງ ຣາຊະພົນ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້, ທ່ານ ດຣ. ບຸນທອງ ບົວຫອມ ຄະນະພັກກະຊວງ ກະສິກຳ ແລະ ປ່າໄມ້ ທັງເປັນເລຂາ ຄະນະພັກຮາກຖານ ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ ພ້ອມນີ້ ກໍ່ມີເລຂາຄະນະພັກຮາກຖານສະຖາບັນ ທ່ານ ສີສະຫວ່າງ ວົງທາຈັກ, ທ່ານ ສຸລິວັນທອງ ກິ່ງແກ້ວ ກໍ່ໄດ້ເຂົ້າຮ່ວມ, ມີບັນດາຫົວໜ້າພະແນກ ພ້ອມຄະນະ, ຫົວໜ້າສູນ ພ້ອມຄະນະ ແລະ ບັນດາພະນັກງານວິຊາການຫຼັກແຫຼ່ງ ແລະ 3 ອົງການຈັດຕັ້ງອ້ອມຂ້າງສະຖາບັນ, ພ້ອມດ້ວຍຜູ້ຕາງໜ້າ ອ້າຍເອື້ອຍນ້ອງພະນັກງານ ທົ່ວສະຖາບັນ ເຂົ້າຮ່ວມປະ ມານ 200 ກວ່າຄົນ ນອກຈາກນັ້ນ ກໍ່ຍັງມີຜູ້ຕ່າງໜ້າ ຈາກບ້ານ ໃກ້ເຮືອນຄຽງ ຜູ້ເຖົ້າຜູ້ແກ່ ແມ່ປ້າອາວຸໂສ ແລະ ອົງການຈັດຕັ້ງອ້ອມຂ້າງບ້ານ ເຂົ້າຮ່ວມ ຈຳນວນຫຼາຍສົມຄວນ. ໃນພິທີດັ່ງກ່າວ ໄດ້ມີການບາສີສູ່ຂັວນ ຕາມຮີດຄອງປະເພນີ ຜູກແຂນອວຍພອນປີໃໝ່ ບັນຍາກາດ ເຕັມໄປດ້ວຍຄວາມອົບອຸ່ນ ມ່ວນຊື່ນ. ພິເສດ ທ່ານ ສີຕາເຮັງ ຣາຊະພົນ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້, ກໍ່ໄດ້ມາຮ່ວມອວຍພອນນຳດ້ວຍ. ໃນຕອນນຶ່ງ ທ່ານ ດຣ. ບຸນທອງ ບົວຫອມ ຫົວໜ້າ ສຄກປ ໄດ້ອວຍພອນໃຫ້ ອ້າຍເອື້ອຍນ້ອງ ພະນັກງານທຸກໆຄົນ ພົບແຕ່ຄວາມສຸກ ເພື່ອປະຕິບັດໜ້າທີ່ວຽກງານໃຫ້ປະສົບຜົນສຳເລັດ ແລະ ສຸດທ້າຍກໍ່ ໄດ້ຮ່ວມພາເຂົ້າສາມະຄີ ແລະ ມ່ວນຊື່ນ ຕາມຮີດຄອງປະເພນີ.